ພຣະຍອດຈຶ່ງໃຫ້ຄົນຄືນມາຟັງສຶບຂອງ ມ.ໂກຣສກຸຍແຣງ ແລະ ກວດເບິ່ງຜູ້ຕາຍທັງສອງຝ່າຍ ເຫັນທະຫານວຽດນາມຕາຍ 12 ຄົນ ແລ້ວໄດ້ນຳເອົາທະຫານວຽດນາມທີ່ບາດເຈັບໄປນຳອີກຄົນນຶ່ງ ກັບປືນ 4 ບອກ.

ໃນດ້ານຫົວເມືອງລາວພອນນີ້ ນອກຈາກມີການຮົບກັນຢູ່ແກ້ງເຈັກ ໃນແຂວງຄຳມ່ວນດັ່ງກ່າວມາແລ້ວນັ້ນ ສຍາມ ກັບ ຝຣັ່ງເສສ ກໍໄດ້ປະທະກັນຢູ່ບ້ານນາລ້າຍ ແລະ ທົ່ງຊຽງຄຳ ໃນແຂວງຊຽງຂວາງອີກ.

ເລື່ອງ ມ.ໂກຣສກຸຍແຣງ ຖືກພຣະຍອດເມືອງຂວາງຍິງຕາຍ ໃນຂນະຕໍ່ສູ້ກັນນີ້ ທາງຝຣັ່ງເສສຖືວ່າ ເປັນຄະດີອາຕກັມ ບໍ່ແມ່ນການສູ້ຮົບກັນທັມມະດາ ສະນັ້ນ ຝຣັ່ງເສສຈຶ່ງໄດ້ຟ້ອງຣັຖບານສຍາມບັງຄັບໃຫ້ໃສ່ໂທດພຣະຍອດເມືອງຂວາງຢ່າງຫນັກ ພ້ອມທັງບັງຄັບໃຫ້ໃຊ້ຄ່າເສັຽຫາຍເປັນອັນມາກ.

ໃນກໍຣະນີນີ້ ຕາມລາຍງານຂອງ ມ.ລຸກ ໄດ້ມີໄປເຖິງອ້າຫລວງໃຫຍ່ຝຣັ່ງເສສ ປະຈຳອິນດູຈີນ ເມື່ອວັນທີ 12 ມີຖຸນາ ຄ.ສ. 1893 ມີຄວາມວ່າ ພຣະຍອດເມືອງຂວາງປະຈຳແຂວງຄຳມ່ອນ ໄດ້ເອົາທະຫານສຍາມມາຈາກທ່າອຸເທນ ແລະ ຫນອງຄາຍ 200 ຄົນ. ທະຫານເຫລົ່ານັ້ນ ຢູ່ໃນຄວາມບັງຄັບຂອງພຣະຍອດ ກັບອ້າຫລວງສຍາມອີກ 3 ຄົນ ໄດ້ມາອ້ອມບ່ອນພັກຂອງ ມ.ໂກຣສກຸຍແຣງ ທີ່ແກ້ງເຈັກ. ໃນຂນະທີ່ທະຫານວຽດນາມຂອງ ມ.ໂກຣສກຸຍແຣງ ຈະຍິງທະຫານສຍາມ ແຕ່ ມ.ໂກຣສກຸຍແຣງ ໄດ້ຫ້າມໄວ້ວ່າ ຄົນມາເຈຣະຈາໂດຍດີ ບໍ່ແມ່ນມາຮົບ. ໃນລະຫວ່າງພວມເວົ້າຢູ່ນີ້ ພຣະຍອດໄດ້ໃຊ້ປືນຣີວອນເວີ້ຍິງ ມ.ໂກຣສກຸຍແຣງ ໃນລະຍະໃກ້ ແລະ ໃນຂນະດຽວກັນ ທະຫານສຍາມ ກໍໄດ້ປຸ້ມເຂົ້າທຳຮ້າຍທະຫານວຽດນາມ, ທະຫານວຽດນາມມີຫນ້ອຍ ຈຶ່ງສູ້ບໍ່ໄດ້ ພວກສຍາມໄດ້ຍາດແຍ່ງເອົາສິ່ງຂອງ ແລ້ວເອົາໄຟຈູດເຮືອນເສັຽ. ການກະທຳຂອງອ້າຫລວງສຍາມໃນຄາວນີ້ ເປັນຄວາມຈິງໃຈແທ້ ເພາະວ່າ ແຕ່ແກ້ງເຈັກໄປຫາທ່າອຸເທນ ຂາລ່ອງເຮືອໃຊ້ເວລາ 3 ວັນ ແລະ ຂາຂຶ້ນ 5 ວັນ ຕາມສັນນິຖານວ່າ ຫນັງສືພຣະຍອດ ທີ່ສົ່ງໄປຫາອ້າຫລວງທ່າອຸເທນນັ້ນ ຄົງນັດໃຫ້ກອງທະຫານຂຶ້ນມາກ່ອນວັນທີ 5 ມີຖຸນາ 8 ມື້ ຄືໃນລະຫວ່າງທີ່ຮູ້ກັນວ່າ ມ.ໂກຣສກຸຍແຣງ ໄດ້ລົ້ມເຈັບ.

**ຈ. ກອງທະຫານຝຣັ່ງເສສກອງທີ 5** ກອງທະຫານຝຣັ່ງເສສກອງທີ 5 ນີ້ ແມ່ນທະຫານເຮືອ. ກອງທະຫານເຮືອນີ້ ຣັຖບານຝຣັ່ງເສສ ໄດ້ແຕ່ງຕັ້ງມອບຫມາຍໃຫ້ນາຍພົນເຮືອຈັຕວາ ຮູມັນ ເປັນຜູ້ບັງຄັບບັນຊາ. ນາຍພົນຮູມັນ ໄດ້ນຳເອົາເຮືອຮົບມາທຳການລາດຕະເວນ ຢູ່ຕາມລຽບຝັ່ງທະເລໄທທາງດ້ານຕາເວັນອອກ ແລະ ໄດ້ເຂົ້າມາຈອດຢູ່ທ່າເມືອງສມຸດປາການ ແລ້ວພໍມາເຖິງ ວັນທີ 13 ເດືອນກໍຣະກະດາ ຄ.ສ. 1893 ຊຶ່ງເປັນເວລາກອງທະຫານບົກໄດ້ເຂົ້າເອົາເມືອງຕ່າງໆ ທາງພາກ